**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 07 ກຸມພາ 2009 (02-07-2010)**

---

## ທ່ານມີຄວາມຄິດທີ່ຖືກຕ້ອງບໍ່?:

**ຂໍ້ພຣະຄັມພີໃນບົດຮຽນ:** (ໂຣມ 8:5-8; 1 ໂກຣິນໂທ 2:12-16; 2 ໂກຣິນໂທ 4:3-4)

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:

ບົດຮຽນນີ້ເວົ້າກ່ຽວກັບສະພາບແນວຄິດຈິດໃຈທີ່ບໍ່ຕົງກັນຄື ຂອງຄົນທີ່ບໍ່ເຊື່ອໃນພຣະຄຣິດແລະ ຂອງຄົນທີ່ເຊື່ອໃນພຣະຄຣິດ. ທ່ານຈະຮຽນຮູ້ວ່າເປັນຫຍັງຄົນທີ່ບໍ່ເຊື່ອ ແລະຄົນທີ່ເຊື່ອຈຶ່ງມີຄວາມຄິດຈິດໃຈແຕກຕ່າງກັນ ແລະຄວາມແຕກຕ່າງຂອງຄວາມຄິດຈິດໃຈນີ້ມີຜົນສະທ້ອນຕໍ່ຊີວິດຢ່າງໃດ.

### ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:

ບົດຮຽນນີ້ສຳຄັນຫລາຍເພາະວ່າ ຄວາມນຶກຄິດຈິດໃຈ ວັທນະທັມ ໃນສມັຍນີ້ມີລັກສະນະທີ່ບໍ່ເປັນຄຣິສຕຽນ ແລະກໍມີແນວຄິດຈິດໃຈຕໍ່ຕ້ານການເປັນຄຣິສຕຽນຫລາຍຂຶ້ນ. ຄຣິສຕຽນຕ້ອງມີຄວາມຄິດຈິດໃຈທີ່ແຕກຕ່າງໄປກວ່ານັ້ນຄື: ຕ້ອງມີແນວຄວາມຄິດຈິດໃຈຂອງພຣະຄຣິດ.

### ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:

ບົດຮຽນນີ້ຈະຊ່ອຍໃຫ້ທ່ານຮູ້ຈັກຄວາມແຕກຕ່າງຂອງສະພາບຈິດໃຈສອງຢ່າງທີ່ບໍ່ຄືກັນ ແລະໃຫ້ໄຈ້ແຍກວ່າຕົນເອງມີຄວາມຄິດຈິດໃຈຢູ່ໃນສະພາບໃດ.

### ການຈັດຕຽມ ແລະແຜນການສອນຂອງຄຣູ:

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### ແນະນຳ:

- ຊີວິດຂອງທ່ານຈະປ່ຽນແປງໄດ້ແນວໃດ ຖ້າຫາກທ່ານບໍ່ຕັດສິນໃຈຫລືເລືອກເອົາ?
- ຂໍໃຫ້ນັກຮຽນປະເມີນຄຸນຄ່າເບິ່ງ ການຕັດສິນໃຈ ແລະການເລືອກຂອງພວກທີ່ໃສ່ໃຈທາງຝ່າຍມະນຸດກັບພວກໃສ່ໃຈທາງຝ່າຍວິນຍານທີ່ເຂົາເຈົ້າໄດ້ເລືອກສຳລັບເຂົາເຈົ້າວ່າມີຄວາມແຕກຕ່າງກັນຢ່າງໃດ?

1. <u>ເນື້ອໜັງ ກັບ ວິນຍານ:</u> (ໂຣມ 8:5-8)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 8:5-8
- ໃຫ້ຂີດເປັນສອງຄໍລັມດັ່ງນີ້:

| ເນື້ອໜັງ | ວິນຍານ |
|---|---|
| • | • |
| • | • |
| • | • |

- ທັງສອງຄຳນີ້ ຈະສະທ້ອນໃຫ້ເຫັນເຖິງພື້ນຖານການບໍ່ຕົງກັນທາງດ້ານຄວາມຄິດຈິດໃຈທີ່ພວກເຮົາຄິດ.
- ນຳພານັກຮຽນອອກຄວາມຄິດຄວາມເຫັນເຖິງ ກິຈກັມທີ່ນຳພາໃນການດຳຣົງຊີວິດຂອງພວກເຮົາໂດຍອີງຕາມທາງຝ່າຍຈິດວິນຍານຫລາຍກວ່າອີງຕາມຝ່າຍເນື້ອໜັງ.
- ໃຫ້ນັກຮຽນຊອກຫາເຫດຜົນສາມຢ່າງໃນຂໍ້ທີ 6-8 ຂອງການກະທຳຂອງຝ່າຍເນື້ອໜັງ ກັບການກະທຳຝ່າຍວິນຍານ.
- ສິ່ງທີ່ມີຄວາມແຕກຕ່າງຂອງການໃສ່ໃຈທາງຝ່າຍເນື້ອໜັງ ແລະທາງຝ່າຍວິນຍານນັ້ນແມ່ນຫຍັງ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (ໂຣມ 8:5-8)

1. ຖ້າຫາກທ່ານສາມາດເອົາການຕັດສິນໃຈໃຫ້ແກ່ຄົນອື່ນທ່ານຈະໃຫ້ການຕັດສິນໃຈອັນໃດ?
2. ແມ່ນຫຍັງທີ່ຄົນສ່ວນຫລາຍຍອມໃຫ້ນຳພາການຕັດສິນໃຈຂອງເຂົາເຈົ້າ?
3. ແມ່ນຫຍັງທີ່ຊ່ອຍໃຫ້ຄົນສ່ວນຫລາຍຕັດສິນໃຈ? (ເນື້ອໜັງ)
4. ອີງຕາມພຣະທັມ ໂຣມ 8:5-8, ໄດ້ສິ່ງຜົນສະທ້ອນເຖິງການຕັດສິນໃຈຂອງພວກເຮົາແນວໃດ?
5. ລັກສະນະແບບໃດເປັນສິ່ງທີ່ຜູ້ເຊື່ອທັງຫລາຍໄດ້ກະທຳຕໍ່ທັມມະຊາດ ຄວາມຄິດຈິດວິນຍານ?

1. <u>ຕາບອດ ກັບ ເຫັນຮຸ່ງ:</u> (2 ໂກຣິນໂທ 4:3-4)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 4:3-4
- ທ່ານໂປໂລໄດ້ອະທິບາຍເຖິງເຣື່ອງທີ່ຖາມກັນວ່າ ເປັນຫຍັງຄົນທັງຫລາຍຈຶ່ງມີຄວາມສັບສົນເຣື່ອງຂ່າວປະເສີດ.
- ຕາບອດໃນທີ່ນີ້ເວົ້າເຖິງການບອດທາງຈິດໃຈ (ເຊັ່ນຕົວຢ່າງ ຮີດຄອງປະເພນີ, ອາຣົມຕ່າງໆ, ວັດຖຸສິ່ງຂອງ ແລະອື່ນໆ.) ເຄິ່ງນຶ່ງສຸດທ້າຍຂອງຂໍ້ 4 ເປັນແຮງກະຕຸ້ນການຂັດຂວາງຕໍ່ສູ້ທາງດ້ານອາຣົມຊຶ່ງປົດບັງຄົນທັງຫລາຍບໍ່ໃຫ້ເຫັນ ຫລືເຂົ້າໃຈຂ່າວປະເສີດໃນວັທນະທັມຂອງພວກເຮົາແນວໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (2 ໂກຣິນໂທ 4:3-4)

1. ໃນເມື່ອສິ່ງຕ່າງໆ ບໍ່ໄດ້ເປັນໄປຕາມທີ່ຄາດໝາຍເອົາໄວ້ຕາມຄວາມຕ້ອງການແລ້ວເປັນຫຍັງຄົນຈຶ່ງມັກແຕ່ຈົ່ມແຕ່ວ່າໃສ່ຄົນອື່ນ?
2. ການຈົ່ມການວ່າຂອງສະມາຊິກໃນໂບດ ຫລືພວກພະນັກງານຂອງໂບດຈຶ່ງເປັນການຊ່ອຍຊາຕານປ້ອງກັນໂບດຈາກການເປັນໂບດແນວໃດ?
3. ໃນ 2 ໂກຣິນໂທ 4:3-4, ແມ່ນໃຜ ຫລືຫຍັງທີ່ທ່ານໂປໂລເວົ້າໃຫ້ວ່າ ເປັນຄົນປະຕິເສດຂ່າວປະເສີດ?

4. ຖ້າມີຄົນປະຕິເສດຂ່າວປະເສີດ ຫລືບໍ່ເຕີບໃຫຍ່ໃນພຣະຄຣິດຢູ່ໃນໂບດທ່ານຈະເສີມສ້າງຄົນເຫລົ່ານັ້ນດ້ວຍວິທີໃດ?

3 . <u>ຄວາມສລາດຂອງມະນຸດ ກັບ ຄວາມຄິດຈິດໃຈຂອງພຣະຄຣິດ:</u> (1 ໂກຣິນໂທ 2:12-16)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 2:12-16
- ອັນໃດທີ່ເຮັດໃຫ້ຈິດໃຈມະນຸດໄດ້ຮັບ ແລະເຊື່ອໄວ້ວາງໃຈໃນພຣະວິນຍານຂອງພຣະເຈົ້າ?
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກບັນລະຍາຍເຣື່ອງຄວາມໝົດກຳລັງໃຈທີ່ເຂົາເຈົ້າມີປະສົບການໃນການອະທິບາຍຂ່າວປະເສີດໃຫ້ຄົນໃດຄົນນຶ່ງແລ້ວຜູ້ນັ້ນບໍ່ໄດ້ສົນໃຈຫຍັງເລີຍ ຢ່າງສັ້ນໆ.
- ຂຽນຄວາມຄິດຈິດໃຈຂອງພຣະຄຣິດໃສ່ກ້ອງຄຳວ່າ ທ່ານມີຄວາມຄິດທີ່ຖືກຕ້ອງບໍ່? ແລ້ວສເນີໃຫ້ນັກຮຽນຊອກຫາສະຕິປັນຍາຢ່າງອື່ນທີ່ໃຫ້ຫລາຍຄົນຍອມຮັບຂ່າວປະເສີດໂດຍຄວາມເຊື່ອໃນຂໍ້ທີ 13. ຂຽນສະຕິປັນຍາຂອງມະນຸດ ໃສ່ກ້ອງຄຳວ່າ ຕາບອດ.
- ຈິດໃຈຂອງຄົນທີ່ປາສຈາກຄວາມເຊື່ອເວົ້າວ່າຂ່າວປເສີດເປັນການໂງ່ຢ່າງໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> 1 ໂກຣິນໂທ 2:12-16

1. ໃນສະຖານທີ່ກິຈການອັນໃດທີ່ທ່ານໄດ້ເປັນພຍານໃຫ້ແກ່ຄົນທີ່ລົດຄວາມສຳຄັນຂ່າວປະເສີດລົງວ່າໂງ່?
2. ປັນຍາຂອງມະນຸດໄດ້ທຳລາຍຄວາມເຊື່ອໄວ້ວາງໃຈຂ່າວປະເສີດຂອງພຣະເຢຊູແມ່ນທາງທີ່ຈະໄດ້ຮັບການອະພັຍບາບບໍ່? ມີທາງເຂົ້າມາຫາພຣະເຈົ້າບໍ່? ແລະຈະໄດ້ຊີວິດນິຣັນບໍ່?
3. ຈິດໃຈຂອງຄົນ ແລະທັມມະຊາດຂອງຄົນໄດ້ຮັບຈິດໃຈແຕກຕ່າງກັນຢ່າງໃດ?
4. ທ່ານຈະໄປສ້າງຄວາມສັມພັນກັບຄົນທີ່ບໍ່ປາກພາສາດຽວກັນກັບທ່ານແນວໃດ?
5. ທ່ານຈະສ້າງສາຍສັມພັນ ແລະເປັນພຍານກັບຄົນທີ່ບໍ່ເຊື່ອດ້ວຍວິທີໃດ?

<u>ພຣະຄັມພີແຫ່ງຄວາມຈິງ</u>

- ຝ່າຍເນື້ອໜັງເສື່ອມໂຍງຢູ່ໃນຄວາມບາບທີ່ມີຢູ່ໃນມະນຸດ ເຖິງແມ່ນວ່າໄດ້ຮັບການປ່ຽນແປງແລ້ວໃນພຣະຄຣິດແຕ່ວ່າຄຣິສຕຽນທຸກຄົນຕ້ອງປ້ອງກັນອຳນາດຂອງເນື້ອໜັງ ແລະຈິດຈໍ່ຈ້ອງມອງຢູ່ທີ່ພລັງອຳນາດຂອງວິນຍານໃນການດຳຣົງຊີວິດປະຈຳວັນ.
- ຄົນຜູ້ທີ່ຖືກປິດບັງໂດຍສິ່ງຊົ່ວຮ້າຍຂອງຄວາມຜິດບາບຂອງເຂົາ ແລະຊາຕານເປັນຜູ້ຕໍ່ຕ້ານຂ່າວປະເສີດ, ແຕ່ພຣະເຈົ້າສາມາດເອົາສິ່ງຊົ່ວຮ້າຍທັງປວງອອກ ສະນັ້ນຄົນທັງຫລາຍຈຶ່ງສາມາດເປັນຄົນທີ່ລອດພົ້ນໂດຍທາງຄວາມເຊື່ອໃນພຣະຄຣິດ.
- ສະຕິປັນຍາຂອງໂລກນີ້ເປັນການຂັດຂວາງພຣະເຈົ້າ, ແຕ່ຜູ້ທີ່ເຊື່ອໄດ້ມີຄວາມຄິດຈິດໃຈຂອງພຣະຄຣິດ ແລະໄດ້ຊີວິດ ອີງຕາມສະຕິປັນຍາທີ່ພຣະວິນຍານບໍຣິສຸດເປັນຜູ້ປະທານໃຫ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH